# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 19 ຕຸລາ 2008 (10-19-2008)

**<u>ຄຣິສຕຽນທຸກຄົນມີບັນຫາເລື່ອງຄວາມບາບ</u>**

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** ໂຣມ 7:9-25

**<u>ບົດຮຽນນີ້ສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?</u>**

ເປີດໂອກາດໃຫ້ກັບທ່ານສາລະພາບການດິ້ນລົນຕໍ່ສູ້ກັບການກະທຳຄວາມບາບຂອງທ່ານແລະອ້ອນວອນຂໍອົງພຣະຜູ້ເປັນເຈົ້າເຂົ້າມາຊ່ອຍໃນຄວາມບາບຂອງທ່ານ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ທ່ານອາຈານໂປໂລໄດ້ສາລະພາບວ່າທ່ານຍັງດິ້ນລົນຕໍ່ສູ້ກັບການກະທຳຄວາມບາບຂອງທ່ານ. ອາຈານໂປໂລໄດ້ພົບເຫັນເຖິງແມ່ນວ່າຜູ້ທີ່ເຊື່ອຕາມທັມມະຊາດຄວາມບາບທີ່ມີຢູ່ໃນຈິດໃຈຂອງທ່ານ ກໍຍັງປາກົດມີມາໃນຄວາມປາຖນາດີຂອງທ່ານ. ຄວາມຈິງ, ໃນການຕໍ່ສູ້ທ່ານໄດ້ມີຄວາມຊົມຊື່ນຍິນດີເພາະທ່ານໄດ້ປາຖນາທີ່ຈະຕິດຕາມພຣະບັນຍັດຂອງພຣະເຈົ້າ. ດັ່ງນັ້ນທ່ານມີຄວາມຮູ້ສຶກວ່າທ່ານຢູ່ໃນສົງຄາມແຫ່ງການຕໍ່ສູ້ກັບຕົວເອງ.

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:</u>**

ມີຄຣິສຕຽນຈຳນວນຫຼວງຫຼາຍທີ່ບໍ່ຍອມຮັບ ພວກເຂົາກໍຍັງຕໍ່ສູ້ກັບຄວາມບາບ.ມີຈຳນວນນຶ່ງອີກທີ່ຍອມຮັບຄວາມອ່ອນແອຂອງພວກເຂົາຕໍ່ຜູ້ອື່ນເບິ່ງຄືວ່າປະສົບຄວາມໝົດຫວັງ. ບົດຮຽນນີ້ໄດ້ຊີ້ບອກຫຼືເປັນໂອກາດສຳລັບທຸກຄົນທີ່ເຊື່ອແລະຈະຍອມຮັບວ່າພວກເຂົາຍັງສືບຕໍ່ກັບການຕໍ່ສູ້ກັບຄວາມບາບນີ້ຢູ່ ແລະພາກສ່ວນນຶ່ງຂອງຄຣິສຕຽນແມ່ນຄວາມບາບໄດ້ອາສັຍຢູ່ໃນຕົວຂອງພວກເຂົາແລະກໍຂັດຂວາງວຽກງານຂອງພຣະເຈົ້າ.

“ ແຊມໄດ້ເວົ້າອອກມາດ້ວຍຖ້າທີໃຈຮ້າຍວ່າ, ຂ້ອຍບໍ່ມີບັນຫາໃນການຫຼິ້ນການພະນັນແລະຂ້ອຍສາມາດເຊົາໄດ້ທຸກເວລາທີ່ຂ້ອຍຕ້ອງການ. ແຊມໄດ້ຕອບຈອມໃນທ່າທີທີ່ເສົ້າໃຈ, ຈອມໄດ້ເວົ້າວ່າດ້ວຍເຫດຜົນອັນໃດເຈົ້າຄືບໍ່ເຊົາເຈົ້າໄດ້ເອົາເງິນຂອງພວກເຮົາໄປຫຼິ້ນຈົນໝົດແລະເຈົ້າເອງກໍເກືອບຈະບໍ່ມີວຽກເຮັດ. ຂ້ອຍມີຄວາມກັງວົນໃຈບໍ່ຮູ້ວ່າແມ່ນຫຍັງຈະເກີດຂຶ້ນໃນຂັ້ນຕໍ່ໄປ, ຖ້າຫາກວ່າການຫຼິ້ນພະນັນເປັນຄວາມສຳຄັນສຳລັບເຈົ້າໆກໍມີບັນຫາ. ຖ້າຫາກເຈົ້າບໍ່ຍອມຈຳນົນແລະຂໍຮ້ອງໃຫ້ພຣະຜູ້ເປັນເຈົ້າຊ່ອຍ”.

ມີຫຼາຍໆຄົນທີ່ມີບັນຫາ ພວກເຂົາເຫຼົ່ານັ້ນບໍ່ຕ້ອງການທີ່ຈະຍອມຮັບສະລະພາບ.ພວກເຮົາຄິດໄດ້ໃນທັນທີໄດ້ວ່າການຫຼິ້ນການພະນັນ, ການເມົາເຫຼົ້າ, ການຫຼິ້ນຊູ້ກໍແມ່ນເປັນບາບແລະເປັນການຕິດຢາເສບຕິດຊະນິດນຶ່ງ. ເຖິງຢ່າງໃດກໍ່ຕາມ, ການກິນຫຼາຍເກີນສ່ວນ, ການໃຈຮ້າຍ, ຄວາມຂີ້ຄ້ານຫຼືການມົ້ວສຸມກັບຄວາມບາບອື່ນໆກໍແມ່ນເປັນການທຳລາຍແລະກໍ່ກວນຄວາມວຸ້ນວາຍ. ພວກເຮົາຫາຂໍ້ແກ້ຕົວ. ຊອກຫາເຫດຜົນ, ຫຼືບໍ່ກໍປະຕິເສດວ່າພວກເຮົາກະທຳບາບ

ບົດຮຽນນີ້ຈະຊ່ວຍທ່ານຍອມຮັບສະລະພາບການຕໍ່ສູ້ຂອງທ່ານ. ກັບການກະທຳບາບແລະຊອກຫາການຊ່ວຍເຫລືອຂອງພຣະເຈົ້າ. ຄວາມບາບອັນໃດທີ່ທ່ານໄດ້ຕໍ່ສູ້ແລະຕ້ອງການຄວາມຊ່ວຍເຫຼືອຈາກພຣະເຈົ້າ?

1. **<u>ການບໍ່ຮູ້ ເຮັດໃຫ້ສະບາຍໃຈ</u>** **(**ໂຣມ 7:9–11)

ການເລືອກອາຫານເບິ່ງຄືວ່າມີຄວາມສັບສົນພຽງນ້ອຍດຽວ ເມື່ອກ່ອນມີກົດລະບຽບທີ່ຖືກຕ້ອງຕາມລະບຽບການຂອງໂຮງຈັກໂຮງງານທີ່ມີລາຍລະອຽດສູດປະສົມອາຫານ. ປະຣິມານສ່ວນຄວາມຮ້ອນ(ເສີມກຳລັງ)ປະຣິມານໄຂມັນແລະປະຣິມານນ້ຳຕານຕິດໄວ້ຕາມກ່ອງບັນຈຸອາຫານ. ຂ້ອຍມີຄວາມພໍອົກພໍໃຈກັບອາຫານວ້າງຂອງຂ້ອຍຫຼາຍເມື່ອຂ້ອຍບໍ່ຮູ້ວ່າມັນບໍ່ມີຜົນດີກັບຕົວຂອງຂ້ອຍ. ເມື່ອທ່ານເບິ່ງໃນເວລາທີ່ຜ່ານມາຂອງທ່ານແລະຄິດວ່າບໍ່ມີເຫດການອັນ

ໃດເກີດຂຶ້ນກໍເຮັດໃຫ້ເກີດມີຄວາມພໍໃຈແມ່ນບໍ່ ທ່ານອັຄສາວົກໂປໂລໄດ້ເປັນພະຍານກ່ຽວກັບການກະທໍາບາບວ່າເຮັດໜ້ອຍຫຼືຫຼາຍກໍເປັນຄວາມບາບ. ໃນໂຣມຂໍ້ 6 ທ່ານເຮັດໃຫ້ຜູ້ທີ່ເຊື່ອເຂົ້າໃຈຢ່າງຄັກແນ່ກັບທີ່ໄດ້ຫລຸດພົ້ນອອກຈາກອໍານາດຂອງການທໍາບາບ. ໃນໂຣມຂໍ້ 7 ທ່ານໂປໂລໄດ້ຂຽນກ່ຽວກັບຜູ້ທີ່ເຊື່ອຍັງສືບຕໍ່ໃນການຕໍ່ສູ້ກັບການກະທໍາຄວາມບາບ. ການກະທໍາຄວາມບາບບໍ່ໄດ້ຄອບງໍາໃນຊີວິດຂອງຜູ້ທີ່ເຊື່ອ, ແຕ່ແທ້ຈິງແມ່ນອິດທິພົນຂອງຄວາມ ບາບພວກເຮົາຈະຄວບຄຸມອໍານາດຂອງການກະທໍາບາບໃນຊີວິດຂອງພວກເຮົາໄດ້ແນວໃດ? ແມ່ນໃຜທີ່ຈະຊ່ວຍເຮົາໄດ້?

ກ່ອນທີ່ພວກເຂົາຮູ້ພຣະບັນຍັດຂອງພຣະເຈົ້າ, ພວກເຂົາແມ່ນຕົກຢູ່ໃນຄວາມບາບ(ຕົວຢ່າງຄວາມບໍ່ດີ)ແລະສິ່ງຕອບແທນຄວາມບາບກໍແມ່ນການລົງໂທດ. ເຖິງຢ່າງໃດກໍຕາມ ເມື່ອເວລາຢູ່ກົງກັນຂ້າມກັບພຣະບັນຍັດຂອງພຣະເຈົ້າ “ທ່ານຈະບໍ່ຕ້ອງການ“ ໃນຕົວຂອງມະນຸດເຮົາແມ່ນໄດ້ສ້າງຄວາມບາບຫລາຍໆຢ່າງເຊັ່ນການບໍ່ເຊື່ອຟັງພຣະບັນຍັດບໍ່ໄດ້ເຮັດໃຫ້ພວກເຮົາຫລຸດອອກຈາກຄວາມບາບ ມັນພຽງແຕ່ເຮັດໃຫ້ເຮົາຮູ້ຄວາມບາບທີ່ອາສັຍຢູ່ໃນຕົວເຮົາເທົ່ານັ້ນ. ການຮູ້ຈັກກັບພຣະບັນຍັດຂອງເຈົ້າເປັນຜົນສະທ້ອນອັນໃດກັບຊີວິດຂອງທ່ານ? ໂດຍປົກກະຕິແລ້ວມະນຸດບໍ່ສາມາດລະງັບຄວາມປາຖນາກັບຕັນຫາຂອງຕົນເອງໄດ້, ຄ້າຍຄືກັນກັບບອກບໍ່ໃຫ້ເດັກນ້ອຍບໍ່ໃຫ້ເຂົ້າໃກ້ຂວດເຂົ້າໜົມປັງ. ມືຂອງພວກເຮົາກໍຊອກຄົ້ນຫາຄວາມເລິກລັບຂອງຄວາມບາບ. ທ່ານອາຈານໂປໂລໄດ້ໃຫ້ຄວາມໝາຍຢ່າງໃດໃນຂໍ້ຄວາມຂອງເພິ່ນທີ່ວ່າຖືກແຍກອອກຈາກພຣະບັນຍັດຄວາມບາບແມ່ນຄວາມຕາຍ? ພຽງແຕ່ເມື່ອເວລາຢູ່ຕໍ່ໜ້າພຣະບັນຍັດຂອງພຣະເຈົ້າພວກເຂົາກໍຮູ້ວ່າເຂົາມີຄວາມບາບຫລາຍປານໃດ. ພວກເຮົາຄິດວ່າພວກເຮົາມີຊີວິດຢູ່ຫ່າງຈາກພຣະບັນຍັດ. ເມື່ອພຣະເຈົ້າເອົາເຮົາທົດສອບໃສ່ກັບພຣະບັນຍັດຂອງພຣະອົງ ພວກເຮົາຮູ້ໄດ້ຢ່າງຄັກແນ່ວ່າພວກເຮົາບໍ່ມີຄວາມດີແລະຄຸນສົມບັດຢູ່ໃນສາຍພຣະເນດຂອງພຣະອົງເຈົ້າ. ບໍ່ພຽງແຕ່ເທົ່ານັ້ນ, ປາສຈາກພຣະຄຣິດພວກເຮົາແມ່ນຕົກຢູ່ໃນຄວາມຕາຍຍ້ອນຄວາມບາບ. ທ່ານຈະເຮັດແນວໃດເມື່ອທ່ານໄດ້ຮູ້ເຖິງຄວາມໜ້າຢ້ານກົວຂອງຄວາມບາບເຂົ້າມາໃນຊີວິດຂອງທ່ານ?

ຄວາມບາບຂອງພວກເຮົາແມ່ນມີຢູ່ກ່ອນ.ພຣະຄຣິດໄດ້ສະລະພຣະອົງເປັນຄ່າໄຖ່ແລະສະລະພຣະອົງເອງເປັນຜູ້ປ້ອງກັນພັຍ. ທ່ານອາຈານໂປໂລໄດ້ເວົ້າວ່າຄວາມບາບຫຼືຄວາມຕາຍໄດ້ອາສັຍຢູ່ໃນຊີວິດເຮົາ, ແລະດໍາເນີນຢູ່ໃນເຮົາອີກດ້ວຍ, ແຕ່ພວກເຮົາບໍ່ໄດ້ເຂົ້າໃຈຜົນຂອງຄວາມບາບຫຼືການລົງໂທດກ່ອນທີ່ພວກເຮົາຈະມາຮູ້ຈັກກັບພຣະບັນຍັດຂອງພຣະເຈົ້າ. ຄົນເຮົາຜູ້ທີ່ຄິດວ່າພວກເຂົາສາມາດເຮັດໃຫ້ພຣະເຈົ້າຊອບພຣະທັຍໂດຍການຮັກສາພຣະບັນຍັດຂອງພຣະເຈົ້າໃນເວລາອັນສັ້ນໆ ຫຼືອີກບໍ່ດົນພວກເຂົາກໍຈະພົບວ່າຜົນຂອງພຣະບັນຍັດນັ້ນແມ່ນເຮັດໃຫ້ຕາຍແນ່ນອນເພາະເຂົາບໍ່ສາມາດປະຕິບັດກັບຄວາມຕ້ອງການຂອງພຣະບັນຍັດໄດ້. ເປັນຫຍັງຄົນສ່ວນຫຼາຍພະຍາຍາມຊອກຫາຫົນທາງໄປສວັນດ້ວຍຕົນເອງ.?

ພຽງແຕ່ຮູ້ຫຼືສັ່ງສອນພຣະບັນຍັດຂອງພຣະເຈົ້າຈະບໍ່ຊ່ວຍແກ້ໄຂໃຫ້ກັບມະນຸດທີ່ທໍາຊົ່ວໄດ້.ພຣະບັນຍັດບໍ່ມີອໍານາດທີ່ຈະຍຸຕິຄວາມບາບ, ທ່ານອາຈານໂປໂລໄດ້ເວົ້າວ່າຄວາມບາບໄດ້ຫຼອກລວງເຂົາ. ນິສັຍບາບຂອງພວກເຮົາສ້າງໂອກາດນໍາເຮົາເຂົ້າເຖິງຄວາມເຊື່ອປະຕິບັດຕາມມາຕະຖານຂອງພຣະເຈົ້າ. ອັນທີ່ຈິງແລ້ວ, ພວກເຮົາບໍ່ສາມາດປະຕິບັດຮັກສາພຣະບັນຍັດຂອງພຣະເຈົ້າໄດ້ດ້ວຍຕົນເອງ, ໃຫ້ຫັນໜ້າມາຫາພຣະຄໍາຂອງພຣະເຈົ້າມີຄວາມໝາຍວ່າພວກເຮົາສາມາດສາລະພາບຄວາມຮູ້ເທົ່າບໍ່ເຖິງການ ແຕ່ວ່າພວກເຮົາຕ້ອງຮັບຜິດຊອບກັບການແບກຫາມຄວາມບາບ. ມັນມີຄວາມໝາຍແນວໃດໃນຊີວິດທ່ານ?

2. **<u>ແມ່ນຫຍັງຄືບັນຫາ:</u>** (ໂຣມ 7:12-13 )

ພຣະບັນຍັດຂອງພຣະເຈົ້າບໍ່ແມ່ນບັນຫາ ຄວາມບາບແມ່ນບັນຫາເຮັດໃຫ້ຄົນບາບເຮັດຕາມຄວາມປາຖນາຂອງເຂົາແລະກາຍເປັນກະບົດຕໍ່ສູ້ແລ້ວກໍຕາຍ. ພຣະຄັມພີຂອງພຣະເຈົ້າໄດ້ສະແດງໃຫ້ເຫັນເຖິງຄວາມຜິດແລະມີຄວາມຮູ້ສຶກເປັນຄົນບາບ. ພຣະບັນຍັດຂອງພຣະເຈົ້ານັ້ນແມ່ນບໍຣິສຸດ, ພຣະຜູ້ເປັນເຈົ້າໄດ້ຈັດຕັ້ງໄວ້ເພື່ອແຍກຄວາມບາບແລະມີໄວ້ເພື່ອຈຸດປະສົງຂອງພຣະເຈົ້າ. ພຣະບັນຍັດຂອງພຣະຂອງເຈົ້າແມ່ນບໍຣິສຸດແລະຍຸດຕິທັມ, ເປັນການດີ

ທີ່ສຸດ.ໃນຂໍ້ຄວາມທີ່ວ່າ ບໍຣິສຸດ, ພິພາກສາ, ຄວາມດີ, ນອກຈາກຄໍາເຫຼົ່ານີ້ແລ້ວທ່ານຍັງມີຄໍາເວົ້າແນວໃດອີກແດ່ທີ່ເວົ້າກ່ຽວກັບພຣະບັນຍັດຂອງພຣະເຈົ້າ? ດ້ວຍເຫດຜົນອັນໃດຊີວິດຂອງພວກເຮົາຈຶ່ງຕົກເຂົ້າໄປໃນຄວາມຕາຍ ເມື່ອພວກເຮົາຮັກສາພຣະບັນຍັດ, ພຣະບັນຍັດແມ່ນດີບໍແມ່ນບໍ່? ອາຈານໂປໂລໄດ້ຕັ້ງຄໍາຖາມຄັ້ງທີສອງຂຶ້ນເພື່ອສະແດງໃຫ້ເຫັນເຫດຜົນທີ່ເປັນຕາຢາກຫົວວ່າບັນຫານັ້ນແມ່ນມັນຢູ່ທີ່ພຣະບັນຍັດແທນທີ່ຈະແມ່ນຢູ່ໃນຄວາມຕາຍ. ຖ້າເປັນດັ່ງນັ້ນແລ້ວສິ່ງທີ່ດີໄດ້ນໍາຄວາມຕາຍມາສູ່ເຮົາບໍ່? ອາຈານໂປໂລຕອບໂດຍທັນທີທັນໃດໂລດວ່າແນ່ນອນບໍ່ແມ່ນເຊັ່ນນັ້ນດອກ, ທ່ານອະທິບາຍຢ່າງແຈ່ມແຈ້ງວ່າເປັນເພາະການປະຕິເສດພຣະເຈົ້າຂອງເຂົາເອງ. ເປັນຫຍັງພວກເຮົາຈຶ່ງຖືກຫລອກໃຫ້ຕໍ່ວ່າກັບພຣະເຈົ້າ? ເພາະຄວາມບາບຂອງເຮົາ ?

ແມ່ນຫຍັງເປັນສິ່ງທີ່ດີ ? ( ພຣະບັນຍັດຂອງພຣະເຈົ້າ ) ບໍ່ໄດ້ເປັນເຫດໃຫ້ຄົນບາບຕາຍ ອັນທີ່ຈິງພຣະບັນຍັດໄດ້ຊ່ອຍໃຫ້ເຮົາຮູ້ຈັກຄວາມບາບທີ່ກໍ່ໃຫ້ເກີດຄວາມຕາຍໃນພວກເຮົາ. ທ່ານໂປໂລໄດ້ເວົ້າເຖິງປະຊາຊົນຢິວຜູ້ເຊື່ອຖືພຣະບັນຍັດວ່າອັນໃດແມ່ນເສັ້ນທາງທີ່ໄດ້ນໍາຄວາມສໍາເຣັດທີ່ຖືກຕ້ອງກວ່າພຣະເຈົ້າ. ພຣະບັນຍັດແມ່ນຄວາມເວົ້າອັນສັດຈິງຂອງພຣະເຈົ້າມີຄວາມໝາຍວ່ານໍາຄວາມຈິງທີ່ຖືກຕ້ອງມາໂດຍທາງພຣະຄຣິດ. ພຣະບັນຍັດໄດ້ຊີ້ໃຫ້ເຫັນຢ່າງແນ່ຊັດແລ້ວວ່າ ຄວາມບາບ, ຣິດອໍານາດ, ແລະການລົງໂທດຮູ້ໄດ້ແນ່ນອນວ່າແມ່ນກົດໝາຍຫ້າມຂອງພຣະເຈົ້າ. ຄວາມບາບຂອງຄົນເຮົາໄດ້ເຮັດໃຫ້ພວກເຂົາຈົມຢູ່ໃນຄວາມບາບຂອງເຂົາ ອັນເປັນການທ້າທາຍພຣະຄໍາຂອງພຣະເຈົ້າທີ່ນໍາເຂົາເຂົ້າໄປສູ່ຄວາມຕາຍ ພຣະບັນຍັດຂອງພຣະເຈົ້າສະແດງໃຫ້ເຮົາເຫັນຄວາມເລິກຂອງຄວາມບາບ, ເມື່ອເຮົາເຂົ້າໃຈໃນພຣະຄໍາຂອງພຣະເຈົ້າຫຼາຍຂຶ້ແລະເຮັດໃຫ້ເຮົາເຂົ້າໃກ້ຊິດກັບພຣະເຈົ້າຫຼາຍຂຶ້ນ. ທ່ານມີພຶດຕິການແນວໃດຕໍ່ການປ່ຽນແປງຄວາມບາບໃນຕົວທ່ານ ?

ບັນຫາບໍ່ແມ່ນຢູ່ໃນພຣະບັນຍັດຂອງພຣະເຈົ້າ,ແຕ່ແມ່ນຢູ່ນໍາແຕ່ລະບຸກຄົນທີ່ກະທໍາຄວາມບາບ. ຄວາມບາບທີ່ຢູ່ພາຍໃນຕົວເຮົາໄດ້ເອົາສິ່ງທີ່ດີໆມາລວງໃຫ້ເຮົາເຮັດບາບ, ສິ່ງເສີມໃຫ້ມະນຸດເຮົາທໍາບາບຫຼາຍຂຶ້ນ. ປາສຈາກພຣະບັນຍັດຂອງພຣະເຈົ້າພວກເຮົາບໍ່ສາມາດຮູ້ວ່າຄວາມບາບເປັນແນວໃດ ເຖິງແມ່ນວ່າມັນຈະເປັນສິ່ງຊົ່ວຮ້າຍ. ຄົນທັງຫລາຍຄິດວ່າສິ່ງເຫລົ່ານັ້ນບໍ່ແມ່ນຄວາມບາບ ພຽງແຕ່ເປັນຄຸນຄ່າ, ການເບິ່ງ, ຫຼືຄວາມຄິດເຫັນທີ່ແຕກຕ່າງກັນ. ພຣະບັນຍັດຂອງພຣະເຈົ້າສະແດງໃຫ້ເຫັນຄວາມບາບ ຄືການເປັນກະບົດຕໍ່ສູ້ກັບພຣະເຈົ້າແລະມາຕະຖານຂອງພຣະອົງ. ພຣະບັນຍັດຂອງພຣະເຈົ້າໄດ້ເປີດເຜີຍໂສມໜ້າຂອງຄວາມບາບແລະຊີ້ໃຫ້ເຫັນວ່າເປັນການຕໍ່ສູ້ກັບພຣະເຈົ້າ.

### 3. <u>**ການຕໍ່ສູ້ດ້ານຈິດວິນຍານ**</u> (ໂຣມ 7:14–25)

ເມື່ອຄົນທັງຫລາຍມາເປັນຜູ້ທີ່ເຊື່ອ, ເຂົາເຈົ້າກໍເຂົ້າໄປສູ່ການຕໍ່ສູ້ ຄືຄວາມຄິດໃໝ່ຈິດໃຈໃໝ່ຈະຕໍ່ສູ້ກັບທັມມະຊາດແຫ່ງຄວາມບາບຂອງເຂົາເຈົ້າ(ເນື້ອໜັງ) ກ່ອນອື່ນໝົດທ່ານຈະມີທ່າທີຢ່າງໃດເມື່ອທ່ານຮູ້ສຶກວ່າຈິດວິນຍານຖືກຊັກນໍາເຂົ້າສູ່ການຕໍ່ສູ້? ພຣະບັນຍັດຂອງພຣະເຈົ້າແມ່ນເຣື່ອງຈິດວິນຍານ. ເຖິງຢ່າງໃດກໍຕາມ, ອາຈານໂປໂລໄດ້ຍອມສາລະພາບວ່າທ່ານແມ່ນໄດ້ຖືກສ້າງຈາກເນື້ອໜັງ, ບໍ່ແມ່ນວ່າທ່ານໄດ້ດໍາເນີນຊີວິດແບບມະນຸດທັມມະດາ, ແຕ່ທ່ານມີຄວາມຮູ້ສຶກວ່າທ່ານຖືກມອບໄວ້ຢູ່ໃນອໍານາດຂອງຄວາມບາບ. ຂໍ້ຂັດແຍ່ງຢ່າງນີ້ມີຢູ່ນານແສນນານເທົ່າກັບພວກເຮົາມີຊີວິດຢູ່ໃນເນື້ອກາຍນີ້. ໃນຜູ້ທີ່ມີຄວາມເຊື່ອກໍອາດຈະສັງເກດບໍ່ເຫັນການທີ່ຈິດວິນຍານໄດ້ມີການຕໍ່ສູ້ຂັດຂືນບໍ່ມີໃຜສາມາດສັງເກດເຫັນໄດ້. ທ່ານໄດ້ຊຸກເຊື່ອງຄວາມຄິດຜິດຫຼືການທໍາຜິດໄວ້ໃນໃຈຂອງທ່ານບໍ່? ທ່ານໄດ້ນໍາມັນອອກມາແຈ້ງໃຫ້ເພື່ອນຫຼືໃຜຜູ້ນຶ່ງເພື່ອເພິ່ນຈະໄດ້ອະທິຖານໃຫ້ກັບທ່ານ? ດ້ວຍເຫດໃດ, ອາຈານໂປໂລໄດ້ຍອມຮັບວ່າທ່ານເອງກໍບໍ່ເຂົ້າໃຈໃນການກະທໍາຂອງທ່ານ. ທ່ານບໍ່ໄດ້ເຮັດຕາມສິ່ງທີ່ທ່ານຢາກເຮັດ ແຕ່ວ່າທ່ານກັບໄປເຮັດສິ່ງທີ່ບໍ່ຢາກເຮັດ, ອາຈານໂປໂລບໍ່ໄດ້ໃຫ້ກັບ ຄວາມຊົ່ວ. ການປະຕິບັດຕົນທີ່ຂາດສິນທັມແຕ່ຈິດວິນຍານຂອງທ່ານກໍໄດ້ຕໍ່ສູ້. ຍິ່ງພວກເຮົາຫຍັບເຂົ້າໃກ້ພຣະເຈົ້າ ພວກເຮົາກໍຍິ່ງເຫັນຄວາມບາບຫຼາຍ.ເໝືອນດັ່ງອາຈານໂປໂລໃນຊີວິດຂອງທ່ານໄດ້ເຫັນຄວາມຜິດບາບທີ່ໜ້າກຽດຊັງຢູ່ໃນນັ້ນແລະໃນຕົວຂອງທ່ານກໍຍັງຢູ່ຫ່າງໄກຈາກມາຕະຖານຂອງພຣະເຈົ້າ. ຈົນກະທັ້ງບັດນີ້ເຫັນວ່າດີຂຶ້ນ. ອາຈານໂປໂລໄດ້ສັງເກດວ່າຫລັກສໍາຄັນໃຫຍ່ຂອງພຣະບັນຍັດແມ່ນມີແຕ່ສິ່ງທີ່ດີໆ ເພາະ

ມັນຊ່ວຍໃຫ້ພວກເຮົາເຫັນຄວາມຜິດທີ່ເຮົາເຮັດຂຶ້ນຄວາມບາບອາສັຍຢູ່ໃນຕົວທ່ານ. ອາຈານໂປໂລເຂົ້າໃຈວ່າໃນເນື້ອກາຍຂອງທ່ານບໍ່ມີຫຍັງດີ ທ່ານປາຖນາເຮັດແຕ່ສິ່ງທີ່ດີໆແຕ່ກັບໄປເຮັດໃນສິ່ງທີ່ບໍ່ດີ ແທນທີ່ຈະເຮັດໃນສິ່ງດີທີ່ທ່ານຕ້ອງການທ່ານກັບໄປເຮັດສິ່ງທີ່ຊົ່ວທີ່ທ່ານບໍ່ຕ້ອງການ. ເຮັດແນວໃດຈະຮູ້ໄດ້ວ່າແນວຄິດກັບສິ່ງຈິດໃຈຂອງເຮົາໄດ້ຮັບການຊ່ວຍເຕັມຂີດ. ໃນບົດຮຽນນີ້ມີຢູ່ສາມເທື່ອທີ່ອາຈານໂປໂລໄດ້ຕໍ່ວ່າ ບັນຫາແມ່ນຄວາມບາບທີ່ອາສັຍຢູ່ເນື້ອກາຍຂອງເຮົາ. ຕົວຂອງເຮົາ(ບາບແຕ່ກຳເນີດ)ແມ່ນເປັນບັນຫາສຳຄັນ (ມີອຳນາດ) ເຖິງແມ່ນວ່າເຮົາຈະເປັນຜູ້ທີ່ເຊື່ອ. ມັນຍັງມີສິດອຳນາດໃຫ້ເຮົາເຮັດໃນທາງກົງກັນຂ້າມກັບສິ່ງທີ່ເຮົາປາຖນາຢາກຈະເຮັດ. ພາຍໃນຕົວຂອງອາຈານໂປໂລເອງ ຊີວິດຈິດວິນຍານຂອງທ່ານແມ່ນອາສັຍຢູ່ນຳພຣະວິນຍານບໍຣິສຸດຂອງພຣະເຈົ້າ. ແມ່ນມີຄວາມຊົມຊື່ນຍິນດີໃນການຕິດພັນກັບພຣະບັນຍັດຂອງພຣະເຈົ້າ. ດັ່ງນັ້ນເຮົາຈຶ່ງເຫັນວ່າມີປາກົດການບາບທັມະຊາດຢ່າງນຶ່ງຄືເມື່ອໃດເຮົາຕັ້ງໃຈຈະເຮັດການດີຄວາມຊົ່ວກໍມາແທນທີ່. ຖ້າທ່ານເປັນຜູ້ທີ່ເຊື່ອທ່ານຕ້ອງເຮັດແຕ່ການດີແຕ່ທ່ານກໍຮູ້ສຶກວ່າຍັງກັບໄປເຮັດໃນສິ່ງທີ່ຊົ່ວຕາມຄວາມຕ້ອງການຂອງເນື້ອກາຍ. ອາຈານໂປໂລໄດ້ປຽບທຽບໃຫ້ເຫັນກົດແຫ່ງຈິດໃຈຂອງເຮົາແລະກົດແຫ່ງຄວາມຜິດບາບໄດ້ອາສັຍຢູ່ໃນຕົວຂອງເຮົາ. ໂດຍທາງສ່ວນເລິກຂອງຈິດໃຈເພິ່ນກໍມີຄວາມປິຕິຍິນດີໃນພຣະບັນຍັດຂອງພຣະເຈົ້າ. ແຕ່ທ່ານເຫັນກົດອີກຢ່າງນຶ່ງພາຍໃນຕົວທ່ານຊຶ່ງຕໍ່ສູ້ກັບກົດແຫ່ງຈິດໃຈແລະຜູກເຮົາໄວ້ໃຕ້ບັງຄັບກົດແຫ່ງຄວາມບາບ. ອາຈານໂປໂລໄດ້ຂອບພຣະຄຸນພຣະເຈົ້າໂດຍທາງພຣະເຢຊູຄຣິດທີ່ໄດ້ເຮັດໃຫ້ເຮົາໄດ້ຫລຸດພົ້ນຈາກຄວາມບາບ.(ຂໍ້ 25)

ຢ່າງໃດກໍຕາມ, ໃຫ້ເຂົ້າໃຈວ່າພາຍໃນຄວາມທຸກເຂັນໃຈກໍຍັງມີທາງອອກຢູ່-ຄືອົງພຣະຜູ້ເປັນເຈົ້າ. ຕາມຂອບເຂດທີ່ເຮົາຍອມຢູ່ໃຕ້ຄວາມເປັນພຣະເຈົ້າຂອງພຣະເຢຊູຄຣິດ, ພຣະອົງຈະເພີ້ມກຳລັງໃຫ້ແກ່ເຮົາເພື່ອຕໍ່ຕ້ານກັບການທົດລອງແລະຫລີກເວັ້ນຈາກບ້ວງແຮ້ວຂອງເນື້ອໜັງ. ການປະເຊີນກັບສະພາບການຢ່າງສັດຊື່ແລະກ້າຫານຈະນຳເຮົາໄປສູ່ການຂອບພຣະຄຸນອັນຊົມຊື່ນຍິນດີແລະເປັນການຄ້ຳປະກັນເຖິງຊັຍຊະນະ.

## <u>ບົດຮຽນແຫ່ງຊີວິດ</u>

ກ່ອນທີ່ພວກເຂົາຮູ້ຈັກພຣະເຢຊູຄຣິດ ຜູ້ທີ່ເຊື່ອຄິດວ່າພວກເຂົາສາມາດຫຼີບຫລີກອອກຈາກການຫລອກຫລວງໄດ້. ພວກເຂົາສ່ວນຫລວງຫລາຍມີຄວາມຮູ້ສຶກວ່າຕົນມີຄວາມລົ້ມເຫຼວໃນເມື່ອພວກເຂົາເຈົ້າຕິດພັນກັບຄວາມບາບ.ຖ້າແມ່ນວ່າພວກເຮົາມີຄວາມທຸກໂສກເວທນາຕົນເອງດ້ວຍຄວາມບາບໃນຮ່າງກາຍນີ້. ເໝືອນດັ່ງອາຈານໂປໂລຫຼືຄຣິສຕຽນສ່ວນຫລາຍ, ມີຈຳນວນຫຼາຍປານໃດໃນພວກທ່ານແລະຂ້າພະເຈົ້າທີ່ຈະຕໍ່ສູ້ເພື່ອເຮັດໃຫ້ດີຂຶ້ນກວ່ານີ້? ນີ້ບໍ່ແມ່ນຂ່າວດີ, ແຕ່ຂ່າວທີ່ດີນັ້ນແມ່ນໄດ້ມາໂດຍທາງອົງພຣະເຢຊູຄຣິດ ພວກເຮົາສາມາດພົບກັບຄວາມຫວັງ ມີອຳນາດແລະຊັຍຊະນະ. ພວກເຮົາຄວນຕຽມພ້ອມທຸກຢ່າງໃນສິ່ງເຫຼົ່ານີ້ເພາະມັນອາດຈະຕິດພັນຢູ່ກັບຕົວພວກເຮົາໄປ, ແຕ່ວ່າຖ້າຊີວິດແຕ່ລະວັນຂອງພວກເຮົາມອບໃຫ້ກັບອົງພຣະເຢຊູຄຣິດແລ້ວພວກເຮົາກໍຖືກປົກຄຸມດ້ວຍພຣະຄຣິດແລ້ວ.

- ❖ ພວກເຮົາຈະກຳຈັດຄວາມບາບຂອງພວກເຮົາໃນອາທິດທີ່ນີ້ແນວໃດ ?
- ❖ ພວກເຮົາຈຳຕ້ອງຮຽນພຣະຄຳຂອງພຣະເຈົ້າ ໃນແຕ່ລະຂັ້ນຕອນເພື່ອກຳຈັດແນວຄິດທີ່ປະຕິເສດດື້ດຶງໃຫ້ກາຍມາເປັນຄົນທີ່ເຊື່ອຟັງແລະກຽມພ້ອມຢູ່ສເມີ.
- ❖ ພວກເຮົາຕ້ອງເຕືອນສະຕິພວກເຮົາເອງ ບັນຫາທີ່ມີຢູ່ນຳເຮົາແມ່ນຄວາມບາບບໍ່ແມ່ນພຣະເຈົ້າ.
- ❖ ພວກເຮົານຳຊີວິດຈິດວິນຍານຕໍ່ສູ້ເອົາຊັຍຊະນະຄວາມບາບດ້ວຍໝົດຈິດໝົດໃຈແລະອ້ອນວອນຕໍ່ພຣະເຢຊູຄຣິດໃຫ້ຊ່ວຍທ່ານ. ພຣະອົງຊົງເປັນພຣະເຈົ້າອົງເປັນເຈົ້າຊີວິດຂອງທ່ານໄດ້ນຳພາແຕ່ລະມື້ລະວັນ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by SS**